ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---໐໓ ❊❊❊ ໒---

ສຳນັກງານນາຍົກລັດຖະມົນຕີ. ເລກທີ 39 /ນຍ.

ວຽງຈັນ, ວັນທີ...12...ເດືອນ...07...ປີ 2001

# ຂໍ້ຕົກລົງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍລະບຽບການຄຸ້ມຄອງ ແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ.

---

- ປະຕິບັດຕາມຫລັກການປົກປັກຮັກສາ, ການຄຸ້ມຄອງ ແລະນຳໃຊ້ທາດລະເບີດຢູ່ ສປປ ລາວ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ຮັບປະກັນໃຫ້ແກ່ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພໃນທຸກດ້ານ.
- ເພື່ອຈຳກັດການລັກລອບເອົາວັດຖຸລະເບີດ ຫລື ທາດລະເບີດທຸກຊະນິດເຂົ້າມານຳໃຊ້ຢູ່ ສປປ ລາວ ຢ່າງຊະຊາຍ, ບໍ່ຖືກຕ້ອງຕາມລະບຽບຫລັກການ ແລະ ກົດໝາຍແຫ່ງ ສປປ ລາວ, ເຮັດໃຫ້ຄົນບໍ່ດີນຳໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ, ມີຜົນສະທ້ອນເຖິງຄວາມບໍ່ສະຫງົບປອດໄພໃນສັງຄົມ.

*ນາຍົກລັດຖະມົນຕີ ຕົກລົງ:*

<u>ມາດຕາ 1:</u> ມອບໃຫ້ກະຊວງປ້ອງກັນປະເທດ ພຽງອົງການດຽວໄດ້ຮັບອະນຸຍາດ ແລະ ມີສິດຄຸ້ມຄອງ, ກວດກາ, ການນຳໃຊ້, ການຜະລິດ, ການຈຳໜ່າຍ ແລະ ການນຳເຂົ້າວັດຖຸທາດລະເບີດຈາກຕ່າງປະເທດ.

<u>ມາດຕາ 2:</u> ໃຫ້ບັນດາກະຊວງ, ອົງການ, ແຂວງ, ກຳແພງນະຄອນ, ເຂດພິເສດ, ບັນດາໂຄງການ, ບໍລິສັດພາຍໃນ ແລະ ຕ່າງປະເທດ, ຫົວໜ່ວຍທຸລະກິດ, ພາກສ່ວນຕ່າງໆ ທີ່ຕ້ອງການນຳໃຊ້ທາດລະເບີດ, ໃຫ້ຂຶ້ນແຜນການນຳໃຊ້ສະເໜີຂຶ້ນກະຊວງປ້ອງກັນປະເທດ ( ກົມອຸດສາຫະ

ກຳປ້ອງກັນຊາດ ) ເປັນຜູ້ຕອບສະໜອງໃຫ້, ເພາະກະຊວງດັ່ງກ່າວໄດ້ມີໂຮງງານຜະລິດທາດລະເບີດ ທີ່ມີຄຸນນະພາບດີ ແລະ ມີຄວາມສາມາດຕອບສະໜອງຢ່າງພຽງພໍ ກັບຄວາມຕ້ອງການໃຫ້ແກ່ບັນດາໂຄງການກໍ່ສ້າງທຸກປະເພດເຊັ່ນ: ໂຄງການຂຸດຄົ້ນລະເບີດຫີນທຸກຊະນິດ, ທະລຸບຸກເບີກເສັ້ນທາງ, ກໍ່ສ້າງເຂື່ອນໄຟຟ້າ ( ເຈາະອຸໂມງ ) ຂຸດຄົ້ນບໍ່ແຮ່ ແລະ ອື່ນໆ.

ມາດຕາ 3: ຫ້າມບັນດາກະຊວງ, ບັນດາແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ບັນດາໂຄງການລົງທຶນພາຍໃນ ແລະ ຕ່າງປະເທດນຳເຂົ້າ, ນຳໃຊ້ທາດລະເບີດທີ່ບໍ່ໄດ້ຮັບອະນຸຍາດຈາກກະຊວງປ້ອງກັນປະເທດ(ກົມອຸດສາຫະກຳປ້ອງກັນຊາດ ) ຢ່າງເດັດຂາດ.

- ຫ້າມຂຸດຄົ້ນເອົາໝື້ ຫລື ທາດລະເບີດ ຈາກລູກບົມ, ລູກແຕກ ແລະ ຫົວລູກປືນໃຫຍ່ ທີ່ບໍ່ທັນແຕກ ຍັງຕົກຄ້າງຢູ່ໃນ ສປປ ລາວ ໃນປາງສົງຄາມນຳໃຊ້ແບບຊະຊາຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຢ່າງເດັດຂາດ

ມາດຕາ 4: ຖ້າບັນດາກະຊວງ, ບັນດາແຂວງ, ກຳແພງນະຄອນ, ໂຄງການ, ບໍລິສັດ, ອົງການ ຫລື ບຸກຄົນໃດຝ່າຝືນ ຖືວ່າເປັນການລະເມີດ ຕໍ່ລະບຽບກົດໝາຍແຫ່ງ ສປປ ລາວ ແລະ ຈະຕ້ອງເປັນຜູ້ຮັບຜິດຊອບທັງໝົດຕໍ່ຜົນສະທ້ອນອັນບໍ່ດີທີ່ເກີດຂຶ້ນ, ຊຶ່ງກະທົບເຖິງຄວາມບໍ່ສະຫງົບປອດໄພໃນສັງຄົມ.

ມາດຕາ 5: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

- ບັນດາແຈ້ງການ, ຂໍ້ຕົກລົງ, ຂໍ້ກຳນົດ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດ ຢູ່ ສປປ ລາວ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ.

ບຸນຍັງ ວໍລະຈິດ